ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 16 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 15 . 6 . 2012.

# ຄໍາສັ່ງ

## ວ່າດ້ວຍການທົດລອງສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ

ເຖິງ: ບັນດາທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການທຽບເທົ່າ, ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງວຽງຈັນ ໃນທົ່ວປະເທດ.

ໃນຊຸມປີຜ່ານມາ, ພວກເຮົາໄດ້ຈັດຕັ້ງປະຕິບັດທິດນໍາ "ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍແຜນການ-ການເງິນ, ສ້າງບ້ານເປັນຫົວໜ່ວຍພື້ນຖານຈັດຕັ້ງປະຕິບັດ". ທິດນໍາດັ່ງກ່າວໄດ້ຊ່ວຍສ້າງຄວາມເຂັ້ມແຂງ ໃຫ້ແກ່ລັດປະຊາທິປະໄຕປະຊາຊົນຂອງພວກເຮົາ ໂດຍເລີ່ມແຕ່ຮາກຖານ-ທ້ອງຖິ່ນຂຶ້ນມາຢ່າງເປັນຈິງ, ແຕ່ກໍຍັງມີດ້ານທີ່ບໍ່ສອດຄ່ອງກັບສະພາບຄວາມເປັນຈິງທາງດ້ານນິຕິກໍາ, ດ້ານການຈັດຕັ້ງ ກໍຄືດ້ານບຸກຄະລາກອນ. ສະນັ້ນ, ຈຶ່ງເຮັດໃຫ້ການປະຕິບັດບໍ່ໄດ້ຮັບຜົນດີເທົ່າທີ່ຄວນ; ເພື່ອໃຫ້ສອດຄ່ອງກັບຍຸດທະສາດການພັດທະນາປະເທດຊາດ ໃນເງື່ອນໄຂໃໝ່ ກອງປະຊຸມໃຫຍ່ຂອງພັກ ຄັ້ງທີ IX ໄດ້ຄົ້ນຄວ້າ ແລະ ເປັນເອກະພາບຮັບຮອງເອົາທິດນໍາ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ, ທິດນໍາດັ່ງກ່າວນີ້ ສອດຄ່ອງກັບທ່າອ່ຽງຂອງການປັບປຸງບູລະນະການປົກຄອງ ຕາມທິດເພີ່ມສິດອໍານາດ, ເພີ່ມຄວາມຮັບຜິດຊອບໃຫ້ທ້ອງຖິ່ນຫຼາຍຂຶ້ນ;

ເພື່ອແກ້ໄຂຂໍ້ຄົງຄ້າງ ທີ່ກ່າວມາຂ້າງເທິງນັ້ນ, ທັງເປັນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກ ຄັ້ງທີ IX ແລະ ມະຕິຕົກລົງ ຂອງກົມການເມືອງສູນກາງພັກ ເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012, ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003 ແລະ ມະຕິຕົກລົງ ຂອງຄະນະປະຈໍາສະພາແຫ່ງຊາດ ສະບັບເລກທີ 050/ຄປຈ, ລົງວັນທີ 13 ມິຖຸນາ 2012; ກ່ຽວກັບທິດນໍາ ສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃຫ້ປະກົດຜົນເປັນຈິງ.

ນາຍົກລັດຖະມົນຕີ ອອກຄໍາສັ່ງ:

I. ກໍາແໜັນຈຸດປະສົງຂອງຄໍາສັ່ງ, ຄວາມໝາຍ ແລະ ຫຼັກການຂອງການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

1. ຈຸດປະສົງຂອງຄໍາສັ່ງ

ຄໍາສັ່ງສະບັບນີ້ ກໍານົດຫຼັກການ, ເນື້ອໃນ, ໜ້າທີ່ຮັບຜິດຊອບ, ຂອບເຂດສິດ ແລະ ການພົວພັນປະສານງານຂອງອົງການປົກຄອງຂັ້ນຕ່າງໆ ທີ່ເປັນເປົ້າໝາຍໃນການທົດລອງ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໂດຍເສີມຂະຫຍາຍຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບໃນການຄຸ້ມຄອງລັດ-ຄຸ້ມຄອງເສດຖະກິດ-ສັງຄົມຂອງອົງການປົກຄອງທ້ອງຖິ່ນໃຫ້ສູງຂຶ້ນ; ເຮັດໃຫ້ການບໍລິຫານ ແລະ ການຄຸ້ມຄອງລັດມີຄວາມຄ່ອງຕົວ, ຕິດແໜັນກັບວຽກງານກໍ່ສ້າງຮາກຖານການເມືອງພັດທະນາຊົນນະບົດຮອບດ້ານ ຕາມ 4 ເນື້ອໃນ 4 ຄາດໝາຍ ແລະ ສອດຄ່ອງກັບເງື່ອນໄຂ ແລະ ຄວາມຮຽກຮ້ອງຕ້ອງການຂອງການ ພັດທະນາ ເພື່ອສະຫຼຸບປະເມີນຜົນ ແລະ ຖອດຖອນບົດຮຽນໄປຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃນຂອບເຂດທົ່ວປະເທດໃນຕໍ່ໜ້າ.

ຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ

ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ແມ່ນຂະບວນການປັບປຸງກົນໄກຄຸ້ມຄອງບໍລິຫານລັດເພື່ອ:

2.1. ເສີມຂະຫຍາຍສິດເປັນເຈົ້າ ແລະ ຍົກສູງຄວາມຮັບຜິດຊອບຂອງທ້ອງຖິ່ນ ແລະ ຮາກຖານໃນການຂຸດຄົ້ນ, ນໍາໃຊ້ທ່າແຮງ ແລະ ຄວາມອາດສາມາດບົ່ມຊ້ອນຂອງຕົນ ເຂົ້າໃນການຄຸ້ມຄອງບໍລິຫານທາງດ້ານການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ການກໍ່ສ້າງ ແລະນໍາໃຊ້ຊັບພະຍາກອນມະນຸດ, ການນໍາໃຊ້ ແລະ ປົກປັກຮັກສາຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ແລະ ຊັບພະຍາກອນອື່ນໆ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດໃນທ້ອງຖິ່ນ ບົນຈິດໃຈເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ; ສ້າງ ແລະ ຍົກລະດັບຄວາມສາມາດຄຸ້ມຄອງບໍລິຫານຂອງທ້ອງຖິ່ນ ແລະ ຮາກຖານໃຫ້ສູງຂຶ້ນ;

2.2. ເຮັດໃຫ້ເສດຖະກິດ-ສັງຄົມຂອງແຕ່ລະທ້ອງຖິ່ນ ແລະ ເຂດແຄວ້ນມີການຂະຫຍາຍຕົວຕໍ່ເນື່ອງ, ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າໃຫ້ດີຂຶ້ນ ແລະ ແກ້ໄຂຄວາມທຸກຍາກຂາດເຂີນຂອງປະຊາຊົນ ໂດຍສະເພາະແມ່ນປະຊາຊົນທີ່ຢູ່ໃນເຂດຊົນນະບົດ, ຫ່າງໄກສອກຫຼີກໃຫ້ໄດ້ເປັນກ້າວໆ. ພ້ອມກັນນັ້ນ ກໍເພີ່ມທະວີການແບ່ງງານ ແລະ ການປະສານສົມທົບ

ລະຫວ່າງທ້ອງ ຖິ່ນ ແລະ ເຂດແຄວ້ນດ້ວຍກັນ ເຮັດໃຫ້ແຕ່ລະທ້ອງຖິ່ນມີການພັດທະນາໄວຂຶ້ນ;

2.3. ນຳເອົາແນວທາງນະໂຍບາຍຂອງພັກ ແລະ ແຜນການຂອງລັດ ລົງໄປຈັດຕັ້ງປະຕິບັດຢູ່ຮາກຖານໃຫ້ແທດເຖິງ ໂດຍສົ່ງເສີມໃຫ້ປະຊາຊົນ ແລະ ຄອບຄົວຜູ້ເຮັດການຜະລິດ ແລະ ການບໍລິການ ໄດ້ມີສ່ວນຮ່ວມຢ່າງເປັນເຈົ້າການ ໃນຂະບວນການສ້າງສາພັດທະນາບ້ານຊ່ອງ, ທ້ອງຖິ່ນຂອງຕົນ ແລະ ປະເທດຊາດ, ສ້າງຫົວໜ່ວຍພື້ນຖານ ຂອງລະບອບປະຊາທິປະໄຕປະຊາຊົນໃຫ້ມີຄວາມເຂັ້ມແຂງ.

3. ຫຼັກການ

ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

3.1. ຮັບປະກັນການປະຕິບັດຫຼັກການອຳນາດລັດເອກະພາບ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໂດຍມີການແບ່ງງານ, ແບ່ງຄວາມຮັບຜິດຊອບ ແລະ ແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ລະອຽດ, ຈະແຈ້ງ, ສົມເຫດສົມຜົນ ແລະ ກົມກຽວກັນ;

3.2. ຕິດພັນກັນຢ່າງສະໜິດແໜ້ນ ແລະ ຮັບໃຊ້ຍຸດທະສາດການສ້າງຄວາມໝັ້ນຄົງ ໃຫ້ແກ່ລັດປະຊາທິປະໄຕປະຊາຊົນ ຂອງ ສປປ ລາວ ແລະ ການສ້າງຂີດຄວາມສາມາດໃນການປະຕິບັດພາລະບົດບາດຄຸ້ມຄອງຈຸລະພາກຂອງທ້ອງຖິ່ນ;

3.3. ດຳເນີນການຢ່າງເປັນລະບົບຄົບຊຸດ, ມີວິທະຍາສາດ, ສອດຄ່ອງກັບສະພາບຈຸດພິເສດ, ທ່າແຮງເສີມຂະຫຍາຍໄດ້ສິດເປັນເຈົ້າ, ຫົວຄິດປະດິດສ້າງ ແລະ ຕອບສະໜອງຜົນປະໂຫຍດຂອງປະຊາຊົນ ໃນທ້ອງຖິ່ນ;

3.4. ເພີ່ມຄວາມຮັບຜິດຊອບໃຫ້ອົງການປົກຄອງທ້ອງຖິ່ນຫຼາຍຂຶ້ນ ໄປຄຽງຄູ່ກັບການສ້າງຄວາມເຂັ້ມແຂງໃຫ້ບັນດາກະຊວງ-ອົງການຢູ່ຂັ້ນສູນກາງ ໃນການປະຕິບັດພາລະບົດບາດຄຸ້ມຄອງມະຫາພາກຢ່າງຄົບຖ້ວນ, ຮັດກຸມບົນພື້ນຖານການເຄົາລົບຫຼັກການລວມສູນປະຊາທິປະໄຕ ແລະ ລະບຽບກົດໝາຍຢ່າງເຂັ້ມງວດ;

3.5. ຮັບປະກັນລັກສະນະຕໍ່ເນື່ອງຂອງວຽກງານ ມີຄວາມຮອບຄອບ, ມີການຊີ້ນຳຢ່າງໃກ້ຊິດ ແລະ ຮັກສາໄດ້ຄວາມສາມັກຄີພາຍໃນ.

## II. ກຳແໜັນເນື້ອໃນ ແລະ ຄາດໝາຍແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ

### 1. ເນື້ອໃນ ແລະ ຄາດໝາຍແຂວງເປັນຫົວໜ່ວຍຍຸດທະສາດ

ເນື້ອໃນ ແລະ ຄາດໝາຍແຂວງເປັນຫົວໜ່ວຍຍຸດທະສາດ ມີດັ່ງນີ້:

1.1. ດ້ານການເມືອງ-ການປົກຄອງ: ທຸກການຈັດຕັ້ງໃນລະບົບການເມືອງຂອງແຂວງໄດ້ຮັບການປັບປຸງ

ໃຫ້ກະທັດຮັດ, ສອດຄ່ອງເໝາະສົມ ແລະ ເຄື່ອນໄຫວຕາມພາລະບົດບາດຂອງຕົນເອງຢ່າງມີປະສິດທິຜົນ ສາມາດເຕົ້າໂຮມຄວາມສາມັກຄີບັນດາຊົນຊັ້ນຄົນທັງປວງກະລະດົມ ແລະ ຈັດຕັ້ງນໍາພາເຂົາເຈົ້າ ເປັນກໍາລັງແຮງໃນການສ້າງສາພັດທະນາເປັນຢ່າງດີ;

1.2. ດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ໄດ້ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຢ່າງເລິກເຊິ່ງ ແລະ ເປັນຂະບວນກວ້າງຂວາງ; ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງແຂວງມີຄວາມໜັກແໜ້ນ, ສາມາດເປັນຫຼັກແຫຼ່ງແກ່ນສານ ໃຫ້ແກ່ການຮັກສາຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ໄດ້ສົມທົບຢ່າງກົມກຽວວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ກັບການພັດທະນາເສດຖະກິດ-ສັງຄົມ ແລະ ການພົວພັນຮ່ວມມືກັບແຂວງ ທີ່ມີຊາຍແດນຕິດຈອດກັນຂອງປະເທດໃກ້ຄຽງ;

1.3. ດ້ານເສດຖະກິດ: ໄດ້ຜັນຂະຫຍາຍແນວທາງ, ແຜນນະໂຍບາຍຂອງພັກ, ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງຊາດ ເປັນແຜນຍຸດທະສາດ, ແຜນງານ, ໂຄງການການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຊາດ ແລະ ປ້ອງກັນຄວາມະຫງົບຂອງແຂວງ ສໍາລັບແຕ່ລະໄລຍະຢ່າງສອດຄ່ອງກັບຈຸດພິເສດ ແລະ ທ່າແຮງທາງດ້ານເສດຖະກິດຂອງແຂວງ ແລະ ຈັດຕັ້ງປະຕິບັດເປັນຢ່າງດີ;

[illegible]

ການສຶກສາ, ສາທາລະນະສຸກທີ່ໜັກແໜ້ນ ແລະ ມີຈໍານວນພຽງພໍຂັ້ນພື້ນຖານ, ມູນເຊື້ອວັດທະນະທໍາ-ປະເພນີອັນດີງາມຂອງປະຊາຊົນບັນດາເຜົ່າ ໄດ້ຮັບການອະນຸລັກ ແລະ ເສີມຂະຫຍາຍ; ເຕົ້າໂຮມ ໄດ້ຄວາມສາມັກຄີປອງດອງລະຫວ່າງປະຊາຊົນບັນດາເຜົ່າ;

1.5. ດ້ານການຕ່າງປະເທດ: ມີຄວາມສາມາດໃນການປະຕິບັດການພົວພັນກັບປະເທດໃກ້ຄຽງ ຢ່າງມີໄຫວພິບ, ສາມາດປົກປັກຮັກສາຜົນປະໂຫຍດລວມຂອງປະເທດຊາດ ແລະ ຂອງທ້ອງຖິ່ນຕົນ, ສາມາດດໍາເນີນການສົ່ງເສີມ, ດຶງດູດເອົາການຮ່ວມມືຈາກພາຍນອກ ແລະ ດໍາເນີນການຕໍ່ສູ້ແກ້ໄຂບັນຫາຕ່າງໆ ດ້ານການພົວພັນກັບບັນດາແຂວງຕິດຈອດຂອງປະເທດໃກ້ຄຽງ.

## 2. ເນື້ອໃນ ແລະ ຄາດໝາຍເມືອງ, ເທດສະບານ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ

ເນື້ອໃນ ແລະ ຄາດໝາຍເມືອງ, ເທດສະບານ ເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ມີດັ່ງນີ້:

2.1. ດ້ານການເມືອງ-ການປົກຄອງ: ອົງການຈັດຕັ້ງໃນລະບົບການເມືອງຂອງຂັ້ນຕົນ ມີຄວາມໜັກແໜ້ນເຂັ້ມແຂງດ້ານການຈັດຕັ້ງ, ບຸກຄະລາກອນ, ແບບແຜນວິທີເຮັດວຽກ ແລະ ການຊີ້ນໍາ-ນໍາພາ, ແຕ່ລະອົງການເຄື່ອນໄຫວຕາມພາລະບົດບາດຂອງຕົນເອງຢ່າງມີປະສິດທິຜົນ ສາມາດເຕົ້າໂຮມຄວາມສາມັກຄີບັນດາຊັ້ນຄົນ, ບັນດາເຜົ່າ ທັງປຸກລະດົມ ແລະ ຈັດຕັ້ງນໍາພາເຂົາເຈົ້າເປັນກໍາລັງແຮງ ໃນການສ້າງສາພັດທະນາໄດ້ດີ;

2.2. ດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ມີ

ຄວາມໜັກແໜ້ນ ທາງດ້ານການເມືອງ-ແນວຄິດ, ຄຸນສົມບັດສິນທຳປະຕິວັດ, ເຂັ້ມແຂງທາງດ້ານການຈັດຕັ້ງ, ການຊີ້ນຳບັນຊາ, ມີຄວາມສາມາດດ້ານວິຊາສະເພາະ, ສາມາດເປັນທັວໜ່ວຍສູ້ລົບເອກະລາດ ທີ່ເຂັ້ມແຂງໃນຮູບແຖວສູ້ລົບບໍລິເວນປ້ອງກັນແຂວງ, ສາມາດບຳລຸງສ້າງ ແລະ ຈັດວາງສັບຊ້ອນ, ຊີ້ນຳ ບັນຊາໜ່ວຍກອງຫຼອນ ແລະ ໜ່ວຍ ປກສ ບ້ານໃນການເຄື່ອນໄຫວ ປ້ອງກັນ-ຮັກສາຄວາມສະຫງົບຄວາມເປັນລະບຽບຮຽບຮ້ອຍ ຢູ່ຂັ້ນບ້ານ;

2.3. ດ້ານເສດຖະກິດ: ມີລະບົບໂຄງລ່າງດ້ານຄົມມະນາຄົມ-ຂົນສົ່ງ ແລະ ການສື່ສານທີ່ສະດວກເຂົ້າເຖິງບ້ານສ່ວນຫຼາຍ, ມີເງື່ອນໄຂອຳນວຍໃຫ້ກຳລັງການຜະລິດຂະຫຍາຍຕົວ; ຂະບວນການສົ່ງເສີມການຜະລິດເປັນສິນຄ້າ ແລະ ພັດທະນາຊົນນະບົດຮອບດ້ານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງກວ້າງຂວາງ; ໄດ້ຊຸກຍູ້ການນຳໃຊ້ແນວພັນ, ເຕັກນິກ ແລະ ວິທະຍາການໃໝ່ເຂົ້າໃນການຜະລິດຕິດພັນກັບການສ້າງຄອບຄົວຕົວແບບ ແລະ ການປຸງແຕ່ງຜົນຜະລິດກະສິກຳຢ່າງເໝາະສົມ; ຮັບປະກັນໄດ້ຄວາມໝັ້ນຄົງດ້ານສະບຽງອາຫານ;

2.4. ດ້ານວັດທະນະທຳ-ສັງຄົມ: ພື້ນຖານໂຄງລ່າງ ແລະ ພາຫານະ-ວັດຖຸ ດ້ານການສຶກສາ ໂດຍສະເພາະແມ່ນຂັ້ນປະຖົມສຶກສາ ພຽງພໍທີ່ຮັບປະກັນໃຫ້ເດັກນ້ອຍໃນເກນອາຍຸເຂົ້າຮຽນຂັ້ນປະຖົມ ໄດ້ມີເງື່ອນໄຂເຂົ້າຮຽນໝົດທຸກຄົນ; ພື້ນຖານໂຄງລ່າງ ແລະ ພາຫານະ-ວັດຖຸ ດ້ານສາທາລະນະສຸກໂດຍສະເພາະແມ່ນກ່ຽວກັບການກັນພະຍາດ, ການສົ່ງເສີມສຸຂະພາບການປິ່ນປົວ ມີຄຸນນະພາບໃນລະດັບທີ່ແນ່ນອນ; ເມືອງໄດ້ມີມາດຕະການທີ່ເໝາະສົມ ໃນການແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມໃຫ້ຫຼຸດໜ້ອຍຖອຍລົງ ແລະ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ; ມູນເຊື້ອວັດທະນະທຳ-ປະເພນີອັນດີງາມ ຂອງປະຊາຊົນບັນດາເຜົ່າໄດ້ຮັບການອະນຸລັກ ແລະ ເສີມຂະຫຍາຍ, ຄວາມສາມັກຄີປອງດອງລະຫວ່າງເຜົ່າ ແລະ ສະຕິຕໍ່ກົນອຸບາຍແບ່ງແຍກຄວາມສາມັກຄີລະຫວ່າງເຜົ່າ ແລະ ອື່ນໆ ໄດ້ຮັບການເສີມສ້າງ ແລະ ຍົກສູງ;

2.5. ດ້ານການຕ່າງປະເທດ: ມີຄວາມສາມາດປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນ, ສ້າງຄວາມສາມັກຄີຮັກແພງ, ການພົວພັນຮ່ວມມື ແລະ ການແລກປ່ຽນຊື້ຂາຍນຳກັນລະຫວ່າງປະຊາຊົນຂອງເມືອງຕົນກັບເມືອງທີ່ມີຊາຍແດນຕິດຈອດກັນຂອງປະເທດເພື່ອນບ້ານເປັນຢ່າງດີ.

3. ເນື້ອໃນ ແລະ ຄາດໝາຍບ້ານເປັນຫົວໜ່ວຍພັດທະນາ

ເນື້ອໃນ ແລະ ຄາດໝາຍບ້ານເປັນຫົວໜ່ວຍພັດທະນາ ມີດັ່ງນີ້:

3.1. ດ້ານການເມືອງ-ການປົກຄອງ: ມີລະບົບການເມືອງເຂັ້ມແຂງ, ມີອົງການປົກຄອງບ້ານ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ທີ່ເຄື່ອນໄຫວຕາມພາລະໜ້າທີ່ ຢ່າງເປັນປົກກະຕິສາມາດເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາຊັ້ນຄົນ, ບັນດາເຜົ່າພາຍໃນບ້ານ, ທັງປຸກລະດົມແລະ ຈັດຕັ້ງນຳພາປະຊາຊົນພາຍໃນບ້ານ ເປັນກຳລັງແຮງໃນການສ້າງສາພັດທະນາບ້ານຊ່ອງ;

3.2. ດ້ານວັດທະນະທຳ-ສັງຄົມ: ປະຊາຊົນພາຍໃນບ້ານ ໄດ້ຮັບການສຶກສາອົບຮົມດ້ານ ການເມືອງ-ແນວຄິດ, ມີຄວາມຕື່ນຕົວການເມືອງ ແລະ ມີຄວາມຫ້າວຫັນເປັນເຈົ້າການເຂົ້າຮ່ວມໃນວຽກງານລວມຂອງບ້ານ ກໍຄືໃນການທຳມາຫາກິນແກ້ໄຂຄວາມທຸກຍາກ, ສ້າງຄວາມຢູ່ດີກິນດີ ແລະ ຄວາມຮັ່ງມີແກ່ຄອບຄົວ ທັງມີຄວາມສາມັກຄີປອງດອງ ແລະ ມີນ້ຳໃຈເອື້ອເຟື້ອຊ່ວຍເຫຼືອກັນ ເປັນຊຸມຊົນທີ່ມີການຄຸ້ມຄອງກັນແໜ້ນ, ຮູ້ໄກ່ເກ່ຍແກ້ໄຂບັນຫານຳກັນຢ່າງຖືກຕ້ອງເປັນທຳ; ເດັກໃນເກນອາຍຸເຂົ້າຮຽນ ລ້ວນແຕ່ໄດ້ເຂົ້າຮຽນໜັງສືໃນໂຮງຮຽນ, ຜູ້ໃຫຍ່ທີ່ມີອາຍຸ 15 ປີຂຶ້ນໄປ ມີລະດັບການສຶກສາຈົບຊັ້ນປະຖົມບຳລຸງ ແລະ ມີແຜນຍົກລະດັບສູງຂຶ້ນເລື້ອຍໆ; ໄດ້ຮັບການຢັ້ງຢືນເປັນບ້ານແບບຢ່າງດ້ານສາທາລະນະສຸກ, ທຸກຄອບຄົວຢູ່ກິນມີສຸຂາອະນາໄມ, ເປັນບ້ານທີ່ມີລະບຽບຈົບງາມ ແລະ ມີສິ່ງແວດລ້ອມທີ່ດີ;

3.3. ດ້ານເສດຖະກິດ: ມີພື້ນຖານໂຄງລ່າງ ຫຼືພື້ນຖານວັດຖຸເຕັກນິກຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ໃນລະດັບທີ່ສາມາດຮັບປະກັນໃຫ້ປະຊາຊົນພາຍໃນບ້ານດຳເນີນການຜະລິດ ແລະ ການບໍລິການເປັນສິນຄ້າ ສ້າງລາຍໄດ້ເຂົ້າຄອບຄົວເປັນປົກກະຕິ; ທຸກຄອບຄົວລ້ວນແຕ່ມີພໍກິນພໍໃຊ້ ແລະ ມີຊີວິດການເປັນຢູ່ປົກກະຕິດີ;

3.4. ດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ: ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ປອດ

## III. ກຳແໜ້ນໜ້າທີ່ ແລະ ຂອບເຂດສິດຂອງອົງການປົກຄອງຂັ້ນຕ່າງໆ ໃນການຈັດຕັ້ງປະຕິບັດ ທິດນຳສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍ ເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ

1. ໜ້າທີ່ ແລະ ຂອບເຂດສິດຂອງກະຊວງ-ອົງການຂັ້ນສູນກາງ

ບັນດາກະຊວງ-ອົງການຂັ້ນສູນກາງ ມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

1.1. ຄົ້ນຄວ້າຜັນຂະຫຍາຍແນວທາງ, ມະຕິກອງປະຊຸມໃຫຍ່ຂອງພັກ ແລະ ມະຕິກອງປະຊຸມສູນກາງ ແຕ່ລະຄັ້ງເປັນຍຸດທະສາດ, ເປັນແຜນການ, ແຜນງານ, ໂຄງການລະອຽດ ຂອງກະຊວງ-ອົງການ ແລະ ຂະແໜງການຂອງຕົນໃຫ້ທັນການ, ຖືກຕ້ອງກັບສະພາບຄວາມເປັນຈິງ ແລະ ທ່າແຮງຂອງທ້ອງຖິ່ນ ທັງເປັນເຈົ້າການຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງປະຕິບັດໃຫ້ເປັນຈິງ ເທື່ອລະກ້າວ;

1.2. ຄົ້ນຄວ້າກຳນົດນະໂຍບາຍ, ມາດຕະຖານເຕັກນິກ, ລະບຽບການ ແລະ ສະເໜີປັບປຸງກົດໝາຍ ທີ່ກ່ຽວຂ້ອງ ສຳລັບຄຸ້ມຄອງຂະແໜງການຂອງຕົນໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ;

1.3. ກຳນົດມາດຕະຖານເງື່ອນໄຂຕຳແໜ່ງບໍລິຫານໃນຂະແໜງການຕົນ ໃນຂອບເຂດທົ່ວປະເທດ,

ວາງແຜນກຳນົດກ່ຽວກັບການກໍ່ສ້າງ, ການຝຶກອົບຮົມພະນັກງານສືບທອດຕຳແໜ່ງບໍລິຫານປະເພດຕ່າງໆ; ການບຳລຸງຍົກລະດັບໃຫ້ພະນັກງານວິຊາການ ຕອບສະໜອງຄວາມຕ້ອງການຂອງການພັດທະນາໃນແຕ່ລະໄລຍະ ພ້ອມທັງຕິດຕາມກວດກາຄຸນນະພາບ ການປະຕິບັດວຽກງານຂອງພະນັກງານຢ່າງເປັນປົກກະຕິ ແລະ ເຂັ້ມງວດ;

1.4. ຄົ້ນຄວ້າວິທະຍາສາດ, ສົມທົບກັບທ້ອງຖິ່ນເຮັດທົດລອງ ແລະ ເຜີຍແຜ່ແນະນຳ ການນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດ ແລະ ການເຮັດທົດລອງເຂົ້າໃນການພັດທະນາຂະແໜງການຕົນ ທັງຢູ່ສູນກາງ ແລະ ທ້ອງຖິ່ນ;

1.5. ສົ່ງເສີມການພັດທະນາ, ຊ່ວຍຊູຍູ້ໜູນ, ຕິດຕາມກວດກາການປະຕິບັດລະບຽບກົດໝາຍ, ມາດຕະຖານເຕັກນິກ ຂະແໜງການຕົນຢູ່ຂັ້ນທ້ອງຖິ່ນ;

1.6. ຄົ້ນຄວ້າແບ່ງຄວາມຮັບຜິດຊອບ, ສິດຕົກລົງບັນຫາ ແລະ ຜົນປະໂຫຍດໃນການຄຸ້ມຄອງວຽກງານຂອງຂະແໜງການຕົນ ໃຫ້ທ້ອງຖິ່ນຄືນໃໝ່ໃຫ້ລະອຽດຈະແຈ້ງຂາດຕົວ ໂດຍຕິດພັນກັບການແບ່ງຄົນ, ງົບປະມານ, ວັດຖຸອຸປະກອນ ແລະ ພາຫະນະທີ່ຈຳເປັນ. ວຽກງານ ຫຼືໂຄງການໃດ ທີ່ຫຍຸ້ງຍາກສັບສົນຫຼາຍ, ຮຽກຮ້ອງເຕັກນິກວິທະຍາການສູງ ທ້ອງຖິ່ນຍັງບໍ່ສາມາດເຮັດໄດ້ແມ່ນໃຫ້ກະຊວງເຮັດໂດຍກົງ, ວຽກງານໃດທ້ອງຖິ່ນເຮັດໄດ້ດີມີປະສິດທິຜົນຫຼາຍກວ່າ ແມ່ນມອບໃຫ້ທ້ອງຖິ່ນເຮັດ;

1.7. ກວດຄືນ ແລະ ປັບປຸງກົນໄກການບໍລິຫານລັດດ້ານຕ່າງໆ ແລະ ບັນດາລະບຽບກົດໝາຍທີ່ກ່ຽວຂ້ອງກັບຂະແໜງການຂອງຕົນໃຫ້ມີຄວາມກະທັດຮັດ, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດງ່າຍ ເພື່ອອຳນວຍຄວາມສະດວກໃຫ້ແກ່ການທຳມາຫາກິນ, ການຜະລິດເປັນສິນຄ້າຂອງປະຊາຊົນ ກໍຄືການດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການ ຂອງຜູ້ປະກອບກິດຈະການ-ນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ;

1.8. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## 2. ໜ້າທີ່ຮັບຜິດຊອບ ແລະ ຂອບເຂດສິດ ຂອງອົງການປົກຄອງຂັ້ນແຂວງ

ບັນດາແຂວງ, ນະຄອນຫຼວງ ມີໜ້າທີ່ຮັບຜິດຊອບ ແລະ ຂອບເຂດສິດ ດັ່ງນີ້:

2.1. ສ້າງຍຸດທະສາດການພັດທະນາຮອບດ້ານຂອງທ້ອງຖິ່ນຕົນ ໂດຍສອດຄ່ອງກັບແຜນຍຸດທະສາດລວມຂອງຊາດ, ແທດເໝາະກັບຈຸດພິເສດ, ທ່າແຮງດ້ານຕ່າງໆ ແລະ ຄວາມສາມາດບົ່ມຊ້ອນຕົວຈິງຂອງທ້ອງຖິ່ນຕົນ ພ້ອມທັງສູ້ຊົນຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວໃຫ້ປາກົດຜົນເປັນຈິງ

2.2. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ງົບປະມານແຫ່ງລັດໃນການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປົກປັກຮັກສາ ແລະ ນຳໃຊ້ແຫຼ່ງຊັບພະຍາກອນຕ່າງໆ ແລະ ການເຊື່ອມໂຍງເສດຖະກິດ ກັບປະເທດໃກ້ຄຽງແຕ່ລະໄລຍະ;

2.3. ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢູ່ພາຍໃນທ້ອງຖິ່ນຕົນ;

2.4. ຈັດຕັ້ງ, ຊີ້ນໍາ-ນໍາພາວຽກງານ ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ ໂດຍຖືເປັນວຽກບູລິມະສິດຂອງແຂວງ;

2.5. ປະສານສົມທົບກັບກະຊວງ, ຂະແໜງການຂັ້ນສູນກາງ ຄົ້ນຄວ້າສ້າງສູນສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການ: ອຸດສາຫະກໍາ, ຫັດຖະກໍາ, ກະສິກໍາ, ຂົນສົ່ງ ແລະ ການບໍລິການອື່ນໆ ເປັນຕົ້ນແມ່ນສູນຄົ້ນຄວ້າ-ບໍລິການດ້ານແນວພັນພືດ ແລະ ສັດ; ສູນບໍລິການດ້ານສັດຕະວະແພດ, ສູນບໍລິການສິນເຊື່ອ ແລະ ເກັບຊື້ຜົນຜະລິດ ແລະ ອື່ນໆ;

2.6. ປະສານສົມທົບກັບກະຊວງ-ອົງການຂັ້ນສູນກາງສ້າງ ແລະ ປະຕິບັດໂຄງການຝຶກອົບຮົມຍົກລະດັບສີມືແຮງງານ, ສ້າງວຽກເຮັດງານທໍາ, ອະນຸລັກວັດທະນະທໍາຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງບັນດາເຜົ່າ;

2.7. ຊີ້ນໍາອົງການປົກຄອງເມືອງ ສ້າງແຜນການ, ແຜນງານ ແລະໂຄງການຈັດສັນອາຊີບ ທີ່ໝັ້ນຄົງ, ພັດທະນາພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ຢູ່ຂັ້ນບ້ານເປັນຕົ້ນແມ່ນຖະໜົນຫົນທາງ, ໂຮງໝໍ, ໂຮງຮຽນ, ໄຟຟ້າ, ນໍ້າປະປາ...;

2.8. ຊີ້ນໍາ ແລະ ອໍານວຍຄວາມສະດວກດ້ານທຶນຮອນ, ພະນັກງານ-ລັດຖະກອນ ແລະ ດ້ານອື່ນໆເມືອງຢ່າງເໝາະສົມ;

2.9. ຄຸ້ມຄອງ ແລະ ອໍານວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດກິດຈະການຂອງຂະແໜງການ ທີ່ດໍາເນີນຢູ່ທ້ອງຖິ່ນຕົນຕາມການມອບໝາຍ ຫຼືການແບ່ງຄວາມຮັບຜິດຊອບຂອງສູນກາງ ແລະ ຄຸ້ມຄອງໂດຍກົງບັນດາໂຄງການພັດທະນາຂອງແຂວງ;

2.10. ພິຈາລະນາອະນຸມັດ ແລະ ຄຸ້ມຄອງໂຄງການ, ກິດຈະການລົງທຶນ ຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ;

2.11. ຂຸດຄົ້ນແຫຼ່ງລາຍຮັບໃຫ້ໝົດ ແລະ ຈັດເກັບລາຍຮັບໃຫ້ໄດ້ຄົບຖ້ວນ; ຄຸ້ມຄອງລາຍຈ່າຍງົບປະມານ ຕາມການຮັບຮອງຂອງສະພາແຫ່ງຊາດໃຫ້ໄດ້ດີ ແລະ ປະຕິບັດວິໄນການເງິນຢ່າງເຂັ້ມງວດ;

2.12. ກວດຄືນ ແລະ ປັບປຸງລະບຽບການ, ກົນໄກບໍລິຫານລັດດ້ານຕ່າງໆ ທີ່ຂັ້ນແຂວງວາງອອກໃຫ້ມີຄວາມກະທັດຮັດ, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດງ່າຍ ເພື່ອອໍານວຍຄວາມສະດວກໃຫ້ແກ່ການທໍາມາຫາກິນ, ການຜະລິດເປັນສິນຄ້າ ຂອງປະຊາຊົນ, ການດໍາເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການ ຂອງຜູ້ປະກອບກິດຈະການ-ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ຕາມການແບ່ງຂັ້ນຄຸ້ມຄອງ;

2.13. ຄຸ້ມຄອງ, ນໍາໃຊ້ ກົງຈັກການຈັດຕັ້ງ ແລະ ຖັນແຖວພະນັກງານ-ລັດຖະກອນ ສາຍຕັ້ງ ແລະ ສາຍຂວາງຢູ່ພາຍໃນແຂວງຂອງຕົນຕາມລະບຽບລັດຖະກອນ ແລະ ກົດໝາຍ. ຕົກລົງແຕ່ງຕັ້ງ,

ຍົກຍ້າຍ ແລະ ປົດຕຳແໜ່ງພະນັກງານຂັ້ນຫົວໜ້າພະແນກຂອງແຂວງ ແລະ ທຽບເທົ່າລົງມາ ບົນພື້ນຖານມາດຕະຖານ, ເງື່ອນໄຂຕຳແໜ່ງບໍລິຫານທີ່ກະຊວງ, ອົງການຂັ້ນສູນກາງວາງອອກ

2.14. ພົວພັນຮ່ວມມືກັບຕ່າງປະເທດຕາມການມອບໝາຍຂອງລັດຖະບານ;

2.15. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

3. ໜ້າທີ່ຮັບຜິດຊອບ ແລະ ຂອບເຂດສິດຂອງອົງການປົກຄອງເມືອງ

ບັນດາເມືອງ, ເທດສະບານ ມີໜ້າທີ່ຮັບຜິດຊອບ ແລະ ຂອບເຂດສິດ ດັ່ງນີ້:

3.1. ສ້າງແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງໂດຍສອດຄ່ອງກັບ ແຜນຍຸດທະສາດລວມຂອງແຂວງ, ຈຸດພິເສດ, ທ່າແຮງທາງດ້ານຊັບພະຍາກອນຕ່າງໆ ແລະ ຄວາມອາດສາມາດ ບົນຊ້ອນຕົວຈິງຂອງທ້ອງຖິ່ນຕົນ;

3.2. ປະຕິບັດໜ້າທີ່ເປັນຫົວໜ່ວຍແຜນການ ແລະ ງົບປະມານຂັ້ນສອງຂອງແຂວງ, ຂຸດຄົ້ນແຫຼ່ງລາຍຮັບໃຫ້ໝົດ ແລະ ຈັດເກັບລາຍຮັບໃຫ້ໄດ້ຄົບຖ້ວນ; ຄຸ້ມຄອງລາຍຈ່າຍງົບປະມານ ຕາມການແບ່ງຂັ້ນຄຸ້ມຄອງຂອງຂະແໜງການ ບົນພື້ນຖານການມອບໝາຍຂອງແຂວງ ແລະ ປະຕິບັດວິໄນການເງິນ ຢ່າງເຂັ້ມງວດ;

3.3. ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ ພາຍໃນທ້ອງຖິ່ນຕົນ;

3.4. ສ້າງ ແລະ ຈັດຕັ້ງປະຕິບັດແຜນການ ແລະ ງົບປະມານແຫ່ງລັດໃນການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການປົກປັກຮັກສາ ແລະ ນຳໃຊ້ແຫຼ່ງຊັບພະຍາກອນສຳລັບແຕ່ລະໄລຍະຂອງເມືອງ;

3.5. ສ້າງ ແລະ ປັບປຸງລະບົບກົງຈັກການຈັດຕັ້ງ ໃຫ້ເປັນລະບົບຄົບຊຸດ. ບັນດາກົງຈັກເສນາທິການຊ່ວຍວຽກອົງການປົກຄອງຂັ້ນເມືອງ ປະກອບດ້ວຍ: ຫ້ອງການວິຊາການ ຂອງຂັ້ນເມືອງ; ບັນດາອົງການ-ຂະແໜງການສາຍຕັ້ງ ຂອງສູນກາງປະຈຳຂັ້ນເມືອງ (ພາສີ, ອາກອນ, ຄັງເງິນ, ທະຫານ, ຕຳຫລວດ, ສານປະຊາຊົນ, ໄອຍະການປະຊາຊົນ ແລະ ສະຖິຕິ);

3.6. ຄຸ້ມຄອງ, ນຳໃຊ້ກົງຈັກການຈັດຕັ້ງ ແລະ ຖັນແຖວພະນັກງານ-ລັດຖະກອນ ຢູ່ພາຍໃນເມືອງ, ເທດສະບານຂອງຕົນຕາມລະບຽບລັດຖະກອນ ແລະ ກົດໝາຍ. ຕົກລົງແຕ່ງຕັ້ງ, ຍົກຍ້າຍ ແລະ ປົດຕຳແໜ່ງພະນັກງານບໍລິຫານຂັ້ນຫົວໜ້າຫ້ອງການວິຊາການຂອງເມືອງ, ເທດສະບານ ແລະ ທຽບເທົ່າລົງມາບົນພື້ນຖານມາດຕະຖານເງື່ອນໄຂທີ່ກະຊວງ, ຂະແໜງການຂັ້ນສູນກາງວາງອອກ;

3.7. ຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານສ້າງບ້ານເປັນຫົວໜ່ວຍພັດທະນາ ໂດຍຖືວຽກດັ່ງກ່າວເປັນວຽກບູລິມະສິດຂອງຂັ້ນເມືອງ;

3.8. ສ້າງສູນສົ່ງເສີມການຜະລິດເປັນສິນຄ້າອຸດສາຫະກຳ, ຫັດຖະກຳ, ກະສິກຳ ແລະ ການບໍລິການ

ຂຶ້ນ ຕາມການຊີ້ນຳ ຫຼືການຕົກລົງຂອງແຂວງ ເປັນຕົ້ນແມ່ນສູນສະໜອງແນວພັນພືດ ແລະ ແນວພັນສັດ; ສູນບໍລິການດ້ານສັດຕະວະແພດ, ໜ່ວຍບໍລິການສິນເຊື່ອ ແລະ ໜ່ວຍເກັບຊື້ຜົນຜະລິດ ແລະ ອື່ນໆ;

3.9. ສ້າງໂຄງການພັດທະນາ ພື້ນຖານເສດຖະກິດ-ສັງຄົມ ຢູ່ຮາກຖານບ້ານຂອງເມືອງຕົນເປັນຕົ້ນແມ່ນຖະໜົນຫົນທາງ, ຊົນລະປະທານ, ການຈັດສັນອາຊີບທີ່ໝັ້ນຄົງ ເພື່ອແກ້ໄຂຄວາມທຸກຍາກ ແລະ ຢຸດຕິການຖາງປ່າເຮັດໄຮ່ປູກເຂົ້າ;

3.10. ກຳນົດບ້ານຈຸດສຸມຕົວແບບດ້ານການພັດທະນາຂອງເມືອງ ແລະ ສຸມທຶນຮອນ, ພະນັກງານ, ອຸປະກອນ ແລະ ພາຫະນະ ທີ່ຈຳເປັນເຂົ້າໃນການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

3.11. ຄຸ້ມຄອງໂຄງການຂອງລັດ ທີ່ດຳເນີນຢູ່ທ້ອງຖິ່ນຕົນຕາມການມອບໝາຍ ຫຼືການແບ່ງຄວາມຮັບຜິດຊອບຂອງຂັ້ນແຂວງ, ຄຸ້ມຄອງໂດຍກົງໂຄງການພັດທະນາ ຂອງຂັ້ນເມືອງ; ພ້ອມທັງຄຸ້ມຄອງ ແລະ ນຳໃຊ້ຜົນສຳເລັດ ຂອງໂຄງການຢ່າງມີປະສິດທິຜົນ;

3.12. ພິຈາລະນາອະນຸມັດ ແລະ ຄຸ້ມຄອງກິດຈະການລົງທຶນ ຂອງເອກະຊົນພາຍໃນປະເທດຕາມການແບ່ງຂັ້ນຄຸ້ມຄອງ ທີ່ກຳນົດໄວ້ໃນກົດໝາຍ;

3.13. ຊີ້ນຳ-ນຳພາບ້ານສ້າງກອງທຶນຕ່າງໆ ຂອງປະຊາຊົນ, ຕິດຕາມກວດກາການເຄື່ອນໄຫວ [illegible]

3.14. ກວດຄືນ ແລະປັບປຸງລະບຽບການ, ກົນໄກການບໍລິຫານລັດດ້ານຕ່າງໆ ທີ່ຂັ້ນເມືອງວາງອອກໃຫ້ມີຄວາມກະທັດຮັດ, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດງ່າຍ ເພື່ອອຳນວຍຄວາມສະດວກໃຫ້ແກ່ການທຳມາຫາກິນຜະລິດເປັນສິນຄ້າຂອງປະຊາຊົນ ກໍຄືການດຳເນີນທຸລະກິດ ການຜະລິດ, ການຄ້າ ແລະ ການບໍລິການ ຂອງຜູ້ປະກອບກິດຈະການ-ນັກລົງທຶນ ຕາມການແບ່ງຂັ້ນຄຸ້ມຄອງ;

3.15. ພົວພັນຮ່ວມມືກັບ ຂັ້ນເມືອງຂອງປະເທດທີ່ມີຊາຍແດນຕິດຈອດກັນ ຕາມການມອບໝາຍຂອງຂັ້ນແຂວງ;

3.16. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຂັ້ນແຂວງ.

4. **ໜ້າທີ່ ແລະ ຂອບເຂດສິດຂອງອົງການປົກຄອງບ້ານ**

ບັນດາບ້ານມີໜ້າທີ່ ແລະ ຂອບເຂດສິດ ດັ່ງນີ້:

4.1. ເຜີຍແຜ່ເຊື່ອມຊຶມ ບັນດາແນວທາງນະໂຍບາຍ, ລະບຽບກົດໝາຍ; ສຶກສາອົບຮົມ, ປຸກລະດົມ, ເຕົ້າໂຮມຄວາມສາມັກຄີຂອງປະຊາຊົນບັນດາເຜົ່າໃຫ້ປະຕິບັດສິດ ແລະ ພັນທະຂອງຕົນຢ່າງຖືກຕ້ອງ;

4.2. ພັດທະນາເສດຖະກິດ-ສັງຄົມ ແລະ ສ້າງພື້ນຖານໂຄງລ່າງ, ວັດຖຸ-ເຕັກນິກ ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນພາຍໃນບ້ານໃຫ້ດີຂຶ້ນ; ປົກປັກຮັກສາຊັບພະຍາກອນທຳມະຊາດ

ແລະ ສິ່ງແວດລ້ອມໃຫ້ຍືນຍົງ;

4.3. ເປັນເຈົ້າການຈັດຕັ້ງປະຕິບັດ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຄຸ້ມຄອງພົນລະເມືອງລາວ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດ ທີ່ຕັ້ງຖິ່ນຖານ ແລະ ຍົກຍ້າຍມາຢູ່ບ້ານຕົນໃຫ້ແໜ້ນ; ຈັດຕັ້ງປະຕິບັດກິດຈະການກໍ່ສ້າງຮາກຖານການເມືອງ ພັດທະນາຊົນນະບົດຮອບດ້ານຢູ່ ໃນທ້ອງຖິ່ນຕົນຕາມການຊີ້ນຳຂອງຂັ້ນເທິງ;

4.4. ເກັບກຳ-ສັງລວມຂໍ້ມູນທາງດ້ານເສດຖະກິດ-ສັງຄົມ, ຄວາມຕ້ອງການພັດທະນາ ຂອງບ້ານ, ສ້າງແຜນພັດທະນາບ້ານໃຫ້ສອດຄ່ອງກັບຈຸດພິເສດ, ທ່າແຮງ ແລະ ຄວາມຕ້ອງການຂອງບ້ານ; ແນະນຳຄອບຄົວໃຫ້ຮູ້ສ້າງແຜນການສ້າງເສດຖະກິດຄອບຄົວຂອງຕົນ ພ້ອມທັງນຳພາການຈັດຕັ້ງປະຕິບັດໃຫ້ປາກົດຜົນເປັນຈິງ;

4.5. ອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດໂຄງການ ຫຼືກິດຈະການ ການຜະລິດ, ທຸລະກິດຕ່າງໆ ຂອງພາກລັດ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດທີ່ໄດ້ຮັບການອະນຸຍາດລົງທຶນຢ່າງຖືກຕ້ອງທີ່ເຄື່ອນໄຫວ ຢູ່ພາຍໃນເຂດບ້ານຂອງຕົນ. ຕິດຕາມ, ເກັບກຳສະພາບການເຄື່ອນໄຫວ, ການນຳໃຊ້ຊັບພະຍາກອນ, ການປົກປັກຮັກສາສະພາບແວດລ້ອມ, ຮີດຄອງປະເພນີອັນດີງາມ ແລະ ອື່ນໆ ເພື່ອລາຍງານໃຫ້ຂັ້ນເທິງຊາບ;

4.6. ເປັນເຈົ້າການ ຫຼືສະເໜີ ຂັ້ນເທິງປັບປຸງການຈັດຕັ້ງບ້ານໃຫ້ເຂັ້ມແຂງໂດຍສອດຄ່ອງ ກັບຈຸດທີ່ຕັ້ງຂອງບ້ານໃນຕົວເມືອງ ຫຼືຊົນນະບົດ; ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນເສດຖະກິດ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມຂະບວນການຈັດຕັ້ງປະຕິບັດກິດຈະການ ກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດ ທີ່ຈັດຕັ້ງປະຕິບັດ ຢູ່ໃນທ້ອງຖິ່ນຕົນ;

4.7. ປົກປັກຮັກສາ, ສົ່ງເສີມຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ ແລະ ຂອງບັນດາເຜົ່າ; ຊຸກຍູ້ສົ່ງເສີມການດຳລົງຊີວິດຂອງປະຊາຊົນ ໃຫ້ຖືກຕ້ອງຕາມຫຼັກສຸຂາອະນາໄມ, ໃຫ້ປະຊາຊົນຜູ້ບໍ່ຮູ້ໜັງສື ແລະ ເດັກໃນເກນອາຍຸຮຽນໄດ້ຮັບການສຶກສາຮ່ຳຮຽນ; ເປັນເຈົ້າການສະກັດກັ້ນສິ່ງຫຍໍ້ທໍ້ ຂອງປະຊາຊົນພາຍໃນບ້ານ;

4.8. ຈັດຕັ້ງ, ອຳນວຍເງື່ອນໄຂ ເພື່ອຈັດເກັບລາຍຮັບ (ຄ່າທຳນຽມ ແລະ ຄ່າບໍລິການ...) ເຂົ້າງົບປະມານແຫ່ງລັດ ແລະ ລັງເງິນບໍລິຫານບ້ານຢ່າງຖືກຕ້ອງ, ຄົບຖ້ວນ, ທັນກັບເວລາຕາມລະບຽບກົດໝາຍກຳນົດຢ່າງເຂັ້ມງວດ; ຄຸ້ມຄອງ, ນຳໃຊ້ເງິນລັງບໍລິຫານບ້ານ ໃຫ້ຖືກຕ້ອງໂປ່ງໃສ ແລະ ມີປະສິດທິຜົນ; ຊີ້ນຳການຈັດຕັ້ງ ແລະ ເຄື່ອນໄຫວຂອງກອງທຶນພາຍໃນບ້ານ;

4.9. ແກ້ໄຂໄກ່ເກ່ຍຂໍ້ຂັດແຍ່ງ, ຄຳຮ້ອງ, ຄຳສະເໜີ ຂອງປະຊາຊົນຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ;

4.10. ລາຍງານສະພາບການຮອບດ້ານຂອງບ້ານ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ຕາມລະບຽບ ຢ່າງເປັນປົກກະຕິ;

4.11. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມການມອບໝາຍຂອງຂັ້ນເມືອງ.

## IV. ກຳແໜັນການພົວພັນປະສານງານລະຫວ່າງອົງການປົກຄອງຂັ້ນທ້ອງຖິ່ນ ກັບກະຊວງ - ອົງການຂັ້ນສູນກາງ ໃນການສ້າງແຜນການ, ງົບປະມານ ແລະ ການຄຸ້ມຄອງບຸກຄະລາກອນ

1. ການປະສານສົມທົບ ກ່ຽວກັບການສ້າງແຜນການ, ໂຄງການ ແລະ ງົບປະມານ

1.1. ໜ່ວຍງານຂອງຂະແໜງວິຊາສະເພາະຂັ້ນບ້ານ, ຂັ້ນເມືອງ, ຂັ້ນແຂວງ ມີພັນທະ ແລະ ໜ້າທີ່ສະໜອງຂໍ້ມູນທຸກຢ່າງທີ່ກ່ຽວຂ້ອງກັບຂະແໜງວິຊາສະເພາະຂອງຕົນ ໃຫ້ຂະແໜງວິຊາສະເພາະຂັ້ນເທິງຕົນ ແຕ່ຂໍ້ມູນທີ່ຈະສະໜອງນັ້ນຕ້ອງໄດ້ຖືກຮັບຮູ້ຢ່າງເປັນທາງການໃນຂັ້ນຂອງຕົນກ່ອນ;

1.2. ການສ້າງແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຂອງອົງການປົກຄອງແຕ່ລະຂັ້ນ. ການສ້າງແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ຂອງອົງການປົກຄອງແຕ່ລະຂັ້ນ ໃຫ້ປະຕິບັດ ດັ່ງນີ້:

ກ. ແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ສ້າງຂຶ້ນບົນພື້ນຖານແຜນຍຸດ [illegible]
[illegible]
ການສ້າງແຜນການ;

ຂ. ແຜນການຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງຂັ້ນແຂວງ ສ້າງຂຶ້ນບົນພື້ນຖານແຜນຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງພະແນກການ ເຈົ້າຂອງຂະແໜງການຕ່າງໆ ຂອງຂັ້ນແຂວງໂດຍແມ່ນພະແນກແຜນການ ແລະ ການລົງທຶນຂອງຂັ້ນແຂວງເປັນຜູ້ສັງລວມຕາມລະບຽບການສ້າງແຜນການ;

ຄ. ແຜນການພັດທະນາເສດຖະກິດ-ສັງຄົມຂອງຂັ້ນເມືອງ ສ້າງຂຶ້ນບົນພື້ນຖານແຜນການພັດທະນາເສດຖະກິດ-ສັງຄົມຂອງຫ້ອງການເຈົ້າຂອງຂະແໜງການຕ່າງໆ ຂອງຂັ້ນມືອງໂດຍແມ່ນຫ້ອງການແຜນການ ແລະ ການລົງທຶນຂອງຂັ້ນເມືອງເປັນຜູ້ສັງລວມ ຕາມລະບຽບການສ້າງແຜນການ.

1.3. ການສ້າງແຜນຍຸດທະສາດການພັດທະນາ ແລະ ໂຄງການ ຂອງຂະແໜງວິຊາສະເພາະໃນຂັ້ນຕ່າງໆ, ການສ້າງແຜນຍຸດທະສາດການພັດທະນາ ແລະ ໂຄງການ ຂອງຂະແໜງວິຊາສະເພາະໃນຂັ້ນຕ່າງໆ ໃຫ້ປະຕິບັດ ດັ່ງນີ້:

ກ. ແຜນຍຸດທະສາດການພັດທະນາວຽກງານຂອງກະຊວງ-ອົງການຕ່າງໆຂັ້ນສູນກາງ ສ້າງຂຶ້ນບົນພື້ນຖານແຜນຍຸດທະສາດ ການພັດທະນາວຽກງານຂອງພະແນກວິຊາການຂອງຕົນ ໃນແຂວງທົ່ວປະເທດ ແລະ ການປະກອບຄຳເຫັນຂອງບັນດາເຈົ້າແຂວງ, ເຈົ້າຄອງນະຄອນ,

ກວມເອົາທຸກວຽກທີ່ກະຊວງ-ອົງການຕົນຮັບຜິດຊອບ;

ຂ. ແຜນຍຸດທະສາດການພັດທະນາວຽກງານຂອງພະແນກວິຊາການຕ່າງໆຂອງແຂວງ, ນະຄອນຫຼວງ ສ້າງຂຶ້ນບົນພື້ນຖານແຜນຍຸດທະສາດການພັດທະນາວຽກງານຂອງຫ້ອງການວິຊາການຂອງຕົນ ໃນເມືອງທົ່ວແຂວງ ແລະການປະກອບຄຳເຫັນຂອງບັນດາເຈົ້າເມືອງ, ຫົວໜ້າເທດສະບານ, ກວມເອົາທຸກວຽກທີ່ພະແນກວິຊາການນັ້ນຮັບຜິດຊອບ;

ຄ. ແຜນການພັດທະນາວຽກງານ ຂອງຫ້ອງການວິຊາການຂອງເມືອງ, ເທດສະບານ ສ້າງຂຶ້ນບົນພື້ນຖານຈຸດພິເສດ ແລະ ຄວາມອາດສາມາດຂຸດຄົ້ນທ່າແຮງບົ່ມຊ້ອນທີ່ກ່ຽວຂ້ອງ ຂອງວຽກງານນັ້ນໃນເມືອງຕົນ, ກວມເອົາທຸກວຽກງານທີ່ຫ້ອງການວິຊາການນັ້ນຮັບຜິດຊອບ.

1.4. ການສ້າງແຜນການ ແລະ ງົບປະມານປະຈຳປີ, 6 ເດືອນ, 3 ເດືອນ.

(1) ແຜນການ ແລະ ງົບປະມານ ປະຈຳປີ, 6 ເດືອນ, 3 ເດືອນ ຂອງອົງການປົກຄອງຂັ້ນຕ່າງໆ ແມ່ນໜ່ວຍງານຂອງຂະແໜງແຜນການ ແລະການລົງທຶນ ແລະ ຂະແໜງການເງິນຂອງຂັ້ນການປົກຄອງທີ່ກ່ຽວຂ້ອງເປັນຜູ້ສັງລວມ ໂດຍໃຫ້ແຜນການ ແລະ ງົບປະມານປະຈຳປີ, 6 ເດືອນ, 3 ເດືອນ ຂອງອົງການປົກຄອງຂັ້ນຕົນ ກວມເອົາທຸກວຽກງານ, ໂຄງການ ແລະ ຫົວໜ່ວຍງົບປະມານ ທີ່ອົງການປົກຄອງຂັ້ນນັ້ນຮັບຜິດຊອບທັງໂດຍກົງ ແລະ ຊີ້ນຳການຈັດຕັ້ງປະຕິບັດຕາມໜ້າທີ່ຮັບຜິດຊອບຂອງໃຜລາວ ແລ້ວສະເໜີໃຫ້ກອງປະຊຸມ ອົງການປົກຄອງຂັ້ນຕົນພິຈາລະນາ ກ່ອນສະເໜີໃຫ້ຂັ້ນເທິງຖັດໄປ ພິຈາລະນາຕາມລະບຽບການສ້າງແຜນການ ແລະ ງົບປະມານ ດັ່ງນີ້:

ກ. ແຜນການ ແລະ ງົບປະມານແຫ່ງລັດ ປະຈຳປີ, 6 ເດືອນ, 3 ເດືອນ ສ້າງຂຶ້ນບົນພື້ນຖານແຜນການ ແລະ ງົບປະມານປະຈຳປີ, 6 ເດືອນ, 3 ເດືອນຂອງບັນດາກະຊວງ ແລະ ບັນດາແຂວງ, ນະຄອນຫຼວງ ຊຶ່ງແມ່ນກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນເປັນຜູ້ສັງລວມຕາມໜ້າທີ່ຮັບຜິດຊອບຂອງໃຜລາວ ແລະ ຕາມລະບຽບການສ້າງແຜນການແລະ ງົບປະມານແຫ່ງລັດ;

ຂ. ແຜນການ ແລະ ງົບປະມານຮັບໃຊ້ການພັດທະນາເສດຖະກິດ-ສັງຄົມປະຈຳປີ, 6 ເດືອນ, 3 ເດືອນ ຂອງຂັ້ນແຂວງ ສ້າງຂຶ້ນບົນພື້ນຖານແຜນການ ແລະ ງົບປະມານປະຈຳປີ, 6 ເດືອນ, 3 ເດືອນ ຂອງພະແນກວິຊາການຂອງຂັ້ນແຂວງ ແລະ ບັນດາເມືອງຂອງແຂວງ, ນະຄອນຫຼວງ ທີ່ກ່ຽວຂ້ອງ ຊຶ່ງແມ່ນພະແນກແຜນການ ແລະ ການລົງທຶນ ແລະ ພະແນກການເງິນເປັນຜູ້ສັງລວມຕາມໜ້າທີ່ຮັບຜິດຊອບຂອງໃຜລາວ ແລະ ຕາມລະບຽບການສ້າງແຜນການ ແລະ ງົບປະມານ;

ຄ. ແຜນການ ແລະ ງົບປະມານຮັບໃຊ້ການພັດທະນາເສດຖະກິດ-ສັງຄົມປະຈຳປີ, 6 ເດືອນ, 3ເດືອນ ຂອງຂັ້ນເມືອງ ສ້າງຂຶ້ນບົນພື້ນຖານແຜນການ ແລະ ງົບປະມານປະຈຳປີ, 6 ເດືອນ, 3 ເດືອນ

ຂອງບັນດາຫ້ອງການວິຊາການຂອງເມືອງ, ເທດສະບານທີ່ກ່ຽວຂ້ອງ ຊຶ່ງແມ່ນຫ້ອງການແຜນການ ແລະ ການລົງທຶນ ແລະ ຫ້ອງການການເງິນເປັນຜູ້ສັງລວມຕາມໜ້າທີ່ຮັບຜິດຊອບຂອງໃຜລາວ ແລະ ຕາມລະບຽບ ການສ້າງແຜນການ ແລະ ງົບປະມານ.

(2) ແຜນການ ແລະ ງົບປະມານ ປະຈຳປີ, 6 ເດືອນ, 3 ເດືອນ ຂອງຂະແໜງວິຊາສະເພາະຂອງອົງການປົກຄອງຂັ້ນຕ່າງໆ ແມ່ນຂະແໜງວິຊາສະເພາະຕ່າງໆ ຂອງອົງການປົກຄອງຂັ້ນນັ້ນເປັນຜູ້ສ້າງໂດຍໃຫ້ແຜນການ ແລະ ງົບປະມານປະຈຳປີ, 6 ເດືອນ, 3 ເດືອນຂອງຕົນ ກວມເອົາສະເພາະວຽກ, ໂຄງການ ແລະ ງົບປະມານ ທີ່ຕົນຮັບຜິດຊອບຈັດຕັ້ງປະຕິບັດໂດຍກົງ. ສຳລັບວຽກທີ່ໄດ້ແບ່ງໃຫ້ຂັ້ນລຸ່ມຄຸ້ມຄອງ ແມ່ນຂັ້ນລຸ່ມຂັ້ນນັ້ນເປັນຜູ້ຂຶ້ນແຜນການ ແລະ ງົບປະມານ ເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

ກ. ກະຊວງ-ອົງການຕ່າງໆ ຂັ້ນສູນກາງສ້າງແຜນການ ແລະ ງົບປະມານຮັບໃຊ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ, 6 ເດືອນ, 3 ເດືອນຂອງຕົນ ກວມເອົາສະເພາະວຽກ, ໂຄງການ ແລະ ງົບປະມານທີ່ຕົນຮັບຜິດຊອບຈັດຕັ້ງປະຕິບັດໂດຍກົງເທົ່ານັ້ນ. ວຽກທີ່ແບ່ງໃຫ້ຂັ້ນລຸ່ມຄຸ້ມຄອງ ແມ່ນຂັ້ນລຸ່ມຂັ້ນນັ້ນ ເປັນຜູ້ຂຶ້ນແຜນການ ແລະ ງົບປະມານ ເພື່ອຈັດຕັ້ງປະຕິບັດ;

ຂ. ພະແນກວິຊາການຂອງຂັ້ນແຂວງ ສ້າງແຜນການ ແລະ ງົບປະມານ ປະຈຳປີ, 6 ເດືອນ, 3

ຈັດຕັ້ງປະຕິບັດໂດຍກົງເທົ່ານັ້ນ. ວຽກທີ່ແບ່ງໃຫ້ຂັ້ນລຸ່ມຄຸ້ມຄອງແມ່ນ ຂັ້ນລຸ່ມຂັ້ນນັ້ນເປັນຜູ້ຂຶ້ນແຜນການ ແລະ ງົບປະມານເພື່ອຈັດຕັ້ງປະຕິບັດ;

ຄ. ຫ້ອງການວິຊາການຂັ້ນເມືອງ ສ້າງແຜນການ ແລະງົບປະມານປະຈຳປີ, 6 ເດືອນ, 3 ເດືອນ, ໂດຍການສັງລວມຄວາມຕ້ອງການ ແລະ ຄວາມອາດສາມາດຂຸດຄົ້ນທ່າແຮງບົ່ມຊ້ອນ ຂອງວຽກງານ ທີ່ກ່ຽວຂ້ອງໃນເມືອງຕົນ.

2. ການປະສານສົມທົບກ່ຽວກັບການອະນຸມັດແຜນການ, ງົບປະມານ

ລັດຖະບານເປັນຜູ້ແຈ້ງ ແລະ ມອບໝາຍແຜນການ ແລະ ງົບປະມານປະຈຳປີ ໃຫ້ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ບັນດາແຂວງ, ນະຄອນຫຼວງ ນຳໄປຈັດຕັ້ງປະຕິບັດຕາມລະບຽບການ ພາຍຫຼັງສະພາແຫ່ງຊາດຮັບຮອງ.

ບັນດາກະຊວງ-ອົງການຂັ້ນສູນກາງ ແບ່ງ ແລະ ມອບໝາຍແຜນການ ແລະ ງົບປະມານແຫ່ງລັດປະຈຳປີ ໃຫ້ບັນດາກົມກອງທີ່ຂຶ້ນໂດຍກົງກັບຕົນ ເພື່ອນຳໄປຈັດຕັ້ງປະຕິບັດ.

ບັນດາແຂວງ, ນະຄອນຫຼວງ ພິຈາລະນາຕົກລົງແບ່ງ, ມອບໝາຍແຜນການ ແລະ ງົບປະມານໃຫ້ພະແນກວິຊາການຕ່າງໆ ອ້ອມຂ້າງແຂວງ, ນະຄອນຫຼວງ ແລະ ບັນດາເມືອງ, ເທດສະບານ ທີ່ຂຶ້ນກັບຂັ້ນແຂວງຕາມການອະນຸມັດຂອງສະພາແຫ່ງຊາດ ແລະ ແຈ້ງການຂອງລັດຖະບານ ເພື່ອນຳໄປຈັດຕັ້ງປະຕິບັດ; ຢູ່ຂັ້ນແຂວງ ແມ່ນເຈົ້າແຂວງ, ເຈົ້າຄອງນະຄອນ ເປັນຜູ້ສັ່ງຈ່າຍ ບາງກໍລະນີຫາກມີຄວາມຈຳເປັນ ເຈົ້າ

ແຂວງ, ເຈົ້າຄອງນະຄອນອາດມອບສິດໃຫ້ຫົວໜ້າພະແນກທີ່ກ່ຽວຂ້ອງເປັນຜູ້ສັ່ງຈ່າຍຕາມຄວາມເໝາະສົມ.

ບັນດາເມືອງ ແລະເທດສະບານ ແບ່ງ, ມອບໝາຍແຜນການ ແລະ ງົບປະມານ ໃຫ້ຫ້ອງການວິຊາການອ້ອມຂ້າງອົງການປົກຄອງເມືອງ, ເທດສະບານ ຕາມການອະນຸມັດຕົວຈິງ ເພື່ອນຳໄປຈັດຕັ້ງປະຕິບັດ; ມອບໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ ເປັນຜູ້ມີສິດສັ່ງຈ່າຍ.

3. ການປະສານສົມທົບ ກ່ຽວກັບການຄຸ້ມຄອງພະນັກງານ-ລັດຖະກອນ

3.1. ກະຊວງ-ອົງການຂັ້ນສູນກາງກຳນົດຕຳແໜ່ງງານ ແລະ ມາດຕະຖານຕຳແໜ່ງງານບໍລິຫານປະເພດຕ່າງໆ ຂອງຂະແໜງການຕົນ. ສົມທົບອົງການປົກຄອງຂັ້ນແຂວງໃນການສ້າງແຜນກຳນົດການກໍ່ສ້າງພະນັກງານສືບທອດຕຳແໜ່ງບໍລິຫານປະເພດຕ່າງໆ ຂອງຂັ້ນແຂວງ ແລະ ຂັ້ນເມືອງ; ດຳເນີນ ການກໍ່ສ້າງ-ຝຶກອົບຮົມ ແລະ ສ້າງເປົ້າໝາຍໃຫ້ຂັ້ນແຂວງ, ຂັ້ນເມືອງ;

3.2. ລັດຖະມົນຕີວ່າການ, ຫົວໜ້າອົງການຂັ້ນສູນກາງຊີ້ນຳ, ຕິດຕາມກວດກາປະເມີນຜົນການເຄື່ອນໄຫວ ຂອງຫົວໜ້າພະແນກວິຊາການຂອງຂັ້ນແຂວງ ໃນການຈັດຕັ້ງປະຕິບັດກົດໝາຍໃນກໍລະນີ ຜູ້ກ່ຽວຫາກບໍ່ມີຄວາມສາມາດເຄື່ອນໄຫວ ຫຼືລະເມີດຕໍ່ລະບຽບກົດໝາຍ ການຄຸ້ມຄອງຂອງຂະແໜງການ ລັດຖະມົນຕີມີສິດສະເໜີໃຫ້ເຈົ້າແຂວງ ທີ່ກ່ຽວຂ້ອງພິຈາລະນາຍົກຍ້າຍໜ້າທີ່, ລົງວິໄນ ຫຼືປົດຕຳແໜ່ງ;

3.3. ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຊັ້ນ, ປະຕິບັດວິໄນຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະທຽບເທົ່າລົງມາ ບົນພື້ນຖານມາດຕະຖານ, ເງື່ອນໄຂຕຳແໜ່ງບໍລິຫານທີ່ກະຊວງ-ອົງການວາງອອກຕາມການສະເໜີຂອງຄະນະຈັດຕັ້ງຂັ້ນແຂວງ ແລະ ຄວາມເປັນເອກະພາບ ຂອງລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການຂັ້ນສູນກາງ ທີ່ກ່ຽວຂ້ອງ ແລະ ພະແນກພາຍໃນຂອງຂັ້ນແຂວງ; ໃນກໍລະນີ ລັດຖະມົນຕີວ່າການກະຊວງ-ຫົວໜ້າອົງການຂັ້ນສູນກາງ ກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຫາກບໍ່ສາມາດເປັນເອກະພາບກັນໄດ້ໃຫ້ປຶກສາຫາລືກັບກະຊວງພາຍໃນ ແລະ ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແລະ ຕົກລົງແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຊັ້ນ, ປະຕິບັດວິໄນພະນັກງານ-ລັດຖະກອນ ທີ່ສັງກັດໃນໂຄງປະກອບກົງຈັກຂອງອົງການປົກຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ ແລະ ຖ້າຫາກຍັງບໍ່ສາມາດແກ້ໄຂໄດ້ ໃຫ້ລາຍງານ ແລະ ສະເໜີຂໍທິດຊີ້ນຳນຳຂັ້ນເທິງ;

3.4. ເຈົ້າເມືອງ, ຫົວໜ້າເທດສະບານ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຊັ້ນ, ປະຕິບັດວິໄນຫົວໜ້າຫ້ອງການ, ຮອງຫົວໜ້າຫ້ອງການ ແລະທຽບເທົ່າລົງມາ ບົນພື້ນຖານມາດຕະຖານ, ເງື່ອນໄຂ ຕຳແໜ່ງບໍລິຫານ ທີ່ກະຊວງ-ອົງການວາງອອກ ຕາມການສະເໜີຂອງຄະນະຈັດຕັ້ງຂັ້ນເມືອງ ແລະ ຄວາມເປັນເອກະພາບ ຂອງຫົວໜ້າພະແນກວິຊາການຂັ້ນແຂວງທີ່ກ່ຽວຂ້ອງ

ແລະ ຫ້ອງການພາຍໃນຂອງຂັ້ນເມືອງ; ໃນກໍລະນີ ຫົວໜ້າພະແນກຂອງຂັ້ນແຂວງ ກັບເຈົ້າເມືອງ, ຫົວໜ້າເທດສະບານ ຫາກບໍ່ສາມາດເປັນເອກະພາບກັນໄດ້ ຕ້ອງນຳສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາ ແລະຕົກລົງ ແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ເລື່ອນຂັ້ນ, ປະຕິບັດວິໄນ ພະນັກງານ-ລັດຖະກອນ ທີ່ສັງກັດໃນໂຄງປະກອບກົງຈັກຂອງອົງການປົກຄອງຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ.

## V. ວິທີຈັດຕັ້ງປະຕິບັດ

ເພື່ອຮັບປະກັນການຈັດຕັ້ງປະຕິບັດເນື້ອໃນຈິດໃຈຄຳສັ່ງສະບັບນີ້ ທຸກພາກສ່ວນທີ່ກ່ຽວຂ້ອງຕ້ອງປະຕິບັດຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນໃຫ້ສຳເລັດ ດັ່ງນີ້:

5.1. ບັນດາກະຊວງ, ອົງການທຽບເທົ່າຂັ້ນສູນກາງທີ່ເປັນເປົ້າໝາຍເຂົ້າຮ່ວມຂະບວນການເຮັດທົດລອງ ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາຈັດຕັ້ງການເຊື່ອມຊຶມຄຳສັ່ງສະບັບນີ້ໃຫ້ເລິກເຊິ່ງເຖິງຖອງ ແລະ ທົ່ວເຖິງທຸກເປົ້າໝາຍ; ສົມທົບອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງເພື່ອທົບທວນຄືນນິຕິກຳ ທີ່ກ່ຽວກັບຂະແໜງການຕົນ ໃນການແບ່ງຂັ້ນຄຸ້ມຄອງວຽກງານຕ່າງໆ ຜ່ານມາ ແລະ ພ້ອມກັນປັບປຸງໃຫ້ສອດຄ່ອງກັບແນວທາງ, ນະໂຍບາຍຂອງພັກ ຕາມທີ່ໄດ້ກ່າວມານີ້ ຢ່າງຊ້າບໍ່ໃຫ້ເກີນວັນທີ 31 ກໍລະກົດ 2012; ການແບ່ງຂັ້ນຄຸ້ມຄອງ

ພ້ອມທັງຮັບໃຊ້ປະສານງານ; ປັບປຸງລະບົບຄຸ້ມຄອງແຜນວຽກ, ແຜນເງິນ ແລະ ແຜນກຳລັງຄົນ ໃຫ້ກົມກຽວກັນ;

5.2. ເປົ້າໝາຍເຮັດທົດລອງທຸກເປົ້າໝາຍ, ທຸກຂັ້ນຈັດຕັ້ງການເຊື່ອມຊຶມຄຳສັ່ງສະບັບນີ້ ແລະ ການແບ່ງຂັ້ນຄຸ້ມຄອງໃໝ່ຂອງກະຊວງ-ອົງການຂັ້ນສູນກາງ ໃຫ້ເລິກເຊິ່ງເຖິງຖອງ ແລະ ສຳເລັດກ່ອນ ວັນທີ 31 ກັນຍາ 2012;

5.3. ກະຊວງພາຍໃນ ອອກຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ເປັນເຈົ້າການປະສານສົມທົບ ແລະ ກະຕຸກຊຸກຍູ້ຂະແໜງການຕ່າງໆໃນຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນທີ່ເປັນເປົ້າໝາຍເຮັດທົດລອງ ໃນການປັບປຸງການແບ່ງຂັ້ນຄຸ້ມຄອງ, ການຈັດຕັ້ງການເຊື່ອມຊຶມເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການເຮັດທົດລອງໃຫ້ສຳເລັດ ຕາມກຳນົດເວລາ;

5.4. ມອບໃຫ້ຄະນະຮັບຜິດຊອບຊີ້ນຳເຮັດທົດລອງ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ບັນດາລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າກະຊວງ, ບັນດາເຈົ້າແຂວງ, ເຈົ້າຄອງນະຄອນ, ອົງການຈັດຕັ້ງໃນລະບົບການເມືອງ ແລະ ອົງການຈັດຕັ້ງທາງສັງຄົມຂອງ ຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານໃນຂອບເຂດທົ່ວປະເທດຈົ່ງຮັບຮູ້ ແລະ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດການເຮັດທົດລອງ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ,

ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ພາຍໃຕ້ການຊີ້ນຳ ຂອງຄະນະຮັບຜິດຊອບຊີ້ນຳເຮັດທົດລອງຂັ້ນຕ່າງໆ ໃຫ້ປະກົດຜົນເປັນຈິງ;

5.5. ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ແລະ ປ່ຽນແທນຄຳສັ່ງແນະນຳ ຂອງນາຍົກລັດຖະມົນຕີ ສະບັບເລກທີ 01/ນຍ, ລົງວັນທີ 11 ມີນາ 2000 ວ່າດ້ວຍການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍແຜນການ-ງົບປະມານ ແລະ ບ້ານເປັນຫົວໜ່ວຍພື້ນຖານຈັດຕັ້ງປະຕິບັດ.

ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ